ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 159 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 17 FEB 2012

# ເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ບໍລິສັດ ໂອນເງິນດ່ວນລະຫວ່າງປະເທດ

- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008.
- ອີງຕາມ ດຳລັດວ່າດ້ວຍການຕ້ານການຟອກເງິນ ສະບັບເລກທີ 55/ນຍ, ລົງວັນທີ 27 ມີນາ 2006.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທີ່ສົນໃຈຢາກສ້າງຕັ້ງ ບໍລິສັດ ໂອນເງິນດ່ວນລະຫວ່າງປະເທດ ຈະຕ້ອງປະຕິບັດເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ດັ່ງລຸ່ມນີ້:

1. ເງື່ອນໄຂ
   1) ມີອາຍຸ 25 ປີ ຂຶ້ນໄປ;
   2) ມີຄຸນສົມບັດດີ, ບໍ່ເຄີຍຕ້ອງໂທດທາງອາຍາໃນຖານະລັກຊັບ, ສໍ້ໂກງ ຫລື ຍັກຍອກຊັບມາກ່ອນ;
   3) ມີຖານະການເງິນດີ, ໄດ້ຮັບຄວາມເຊື່ອຖືເປັນທີ່ຍອມຮັບຂອງປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

2. ການປະກອບເອກະສານ
   1) ຄຳຮ້ອງຂໍສ້າງຕັ້ງ;
   2) ເອກະສານອະນຸຍາດຈາກ ບໍລິສັດຜູ້ຕາງໜ້າໃຫ້ສ້າງຕັ້ງ;
   3) ບົດວິພາກເສດຖະກິດ ແລະ ແຜນດຳເນີນທຸລະກິດ 05 ປີທຳອິດ;
   4) ສຳເນົາຖານະການເງິນຂອງຜູ້ຂໍສ້າງຕັ້ງ ຫລື ບໍລິສັດ 03 ປີ ຜ່ານມາ;
   5) ຊີວະປະຫວັດ, ໃບແຈ້ງໂທດ, ໃບຢັ້ງຢືນຄຸນວຸດທິ ແລະ ປະສົບການຂອງຜູ້ສະເໜີຂໍສ້າງຕັ້ງ;
   6) ໃບຢັ້ງຢືນ ແລະ ຮູບພາບທີ່ຕັ້ງສຳນັກງານ;
   7) ກົດລະບຽບພາຍໃນ;

8) ສັນຍາການເປັນຕົວແທນ ສະບັບ ພາສາລາວ ແລະ ອັງກິດ;

9) ໃບຖອກເງິນຄ່າບໍລິການຂໍສ້າງຕັ້ງຈາກ ກົມບໍລິການ ຈຳນວນ 5.000.000 ກີບ (ຫ້າລ້ານກີບຖ້ວນ). ປະຈຸບັນແມ່ນບໍ່ໄດ້ເກັບ ແຕ່ຈະເກັບຄ່າຄຸ້ມຄອງປະຈຳປີ ໃນອັດຕາສ່ວນດຽວກັບ ບໍລິສັດ ເຊົ່າສິນເຊື່ອ 0,002% ຂອງຊັບສິນທັງໝົດ;

10) ປະຫວັດຫຍໍ້ຂອງບໍລິສັດ (ໃນກໍລະນີເປັນບໍລິສັດ);

11) ສຳເນົາທະບຽນວິສາຫະກິດ (ໃນກໍລະນີເປັນບໍລິສັດ);

12) ທຶນຈົດທະບຽນບໍ່ໄດ້ກຳນົດ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ